**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 83 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 22

# ມະຕິ

# ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາ ການສະເໜີຂໍພັກການ-ຮັບອຸດໜູນບໍານານ ຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສປປ ລາວ ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ໜັງສືສະເໜີຂອງທ່ານ ປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 211/ປປທ, ລົງວັນທີ 28 ທັນວາ 2022 ກ່ຽວກັບການຮັບອຸດໜູນບໍານານ ຂອງທ່ານ ນາຍົກລັດຖະມົນຕີ;
- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ມາດຕາ 70 ກ່ຽວກັບການຮັບອຸດໜູນບໍານານຂອງ ພະນັກງານ-ລັດຖະກອນ.

ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ **IX** ໃນວາລະຕອນບ່າຍຂອງວັນທີ 30 ທັນວາ 2022 ຕາງໜ້າຄະນະປະຈໍາສະພາແຫ່ງຊາດໄດ້ຂຶ້ນຜ່ານ ໜັງສືສະເໜີຂອງປະທານປະເທດ ແຫ່ງ ສປປ ລາວ ກ່ຽວກັບການສະເໜີຂໍພັກການ-ຮັບອຸດໜູນບໍານານຂອງທ່ານ ນາຍົກລັດຖະມົນຕີ ແລະ ການລາຍງານການປະຕິບັດໜ້າທີ່ໃນໄລຍະຜ່ານມາຂອງຕົນ.

## ກອງປະຊຸມ ຕົກລົງ:

**ມາດຕາ 1** ເຫັນດີໃຫ້ທ່ານ **ພັນຄໍາ ວິພາວັນ** ກໍາມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພັກການ-ຮັບອຸດໜູນບໍານານ ຕາມການສະເໜີຂອງທ່ານ ປະທານປະເທດ ແຫ່ງ ສປປ ລາວ.

**ມາດຕາ 2** ບັນດາອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ທ່ານທີ່ຖືກສະເໜີຂໍພັກການ-ຮັບອຸດໜູນບໍານານ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ